*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 03, 173-180*
*https://doi.org/10.69692/SUJMRD1203173*

# Factors Affecting Labor Demand Among Service Business Entrepreneurs in Luang Prabang City

**Vankham Vannalar***

*Save the children Organization base in Luang Prabang province, Lao PDR*

***Correspondence:** Vankham Vannalar, Save the children Organization base in Luangprabang province Tel: 020 76729982, E-mail: Vanhkhamvnl@gmail.com

***Article Info:***

***Submitted: January 8, 2026***
***Revised: July 20, 2026***
***Accepted: July 30, 2026***

**Abstract**

This research on factors affecting the employment needs of service business operators in Luang Prabang aims to 1) study opinions on the importance of factors affecting the employment needs of service business operators in Luang Prabang and 2) identify factors affecting the employment needs of service business operators in Luang Prabang. This research is quantitative research using closed-ended and open-ended questionnaires to collect data from a sample of 256 establishments (1 service business operator/1 establishment), using descriptive statistics and inferential statistics to analyze the data through a statistical software package.

The research results found: 1) Study the opinions on the importance of the factors that affect the employment needs of service business operators in LuangPrabang city. Service business operators in LuangPrabang city give importance to overall labor characteristics at a moderate level with $\overline{X}$ = 3.32 and SD = 0.49 which are detailed as follows: Personality is at the highest level with $\overline{X}$ = 4.50 and SD = 0.39, followed by knowledge and ability at a medium level with $\overline{X}$ = 2.44 and SD = 0.51, followed by the skills of workers with $\overline{X}$ = 2.98 and SD = 0.52 and finally the knowledge of specialized subjects at a low level with $\overline{X}$ = 3.35 and SD = 0.48. 2) Factors affecting the employment needs of service business operators in LuangPrabang city For the factors affecting the employment needs of service business operators in LuangPrabang city, it was found that there are only 4 factors that affect the employment needs in the same direction: the factors that affect the employment needs the most are the personality factors of the workers, followed by the knowledge and ability factors and the labor skill factors and the specialized knowledge factors of the workers, respectively with a statistical significance level of 0.05.

**Keywords:** *Labor demand, Service business entrepreneur, LuangPrabang city*

## 1. ພາກສະເໜີ

ຕະຫຼອດໄລຍະເວລາທີ່ຜ່ານມາ ລັດຖະບານ ສປປ ລາວ ໄດ້ພະຍາຍາມສ້າງນະໂຍບາຍກ່ຽວກັບການຈ້າງແຮງງານໂດຍສະເພາະແມ່ນເລັງໃສ່ ການສ້າງວຽກເຮັດງານທຳ ໃນວິສາຫະກິດຂອງຂະແໜງການຕ່າງໆ ເພື່ອຂະຫຍາຍງານ ໃນການປະກອບອາຊີບໃໝ່ ແລະ ຂະແໜງເສດຖະກິດໃໝ່ເປັນຕົ້ນ ແມ່ນຕາໜ່າງການຜະລິດອຸດສາຫະກຳ ແລະ ການບໍລິການເຊັ່ນ: ຟື້ນຟູບັນດາໂຮງຈັກໂຮງງານໄປໃນຊ່ວງໄລຍະຊົ່ວຄາວ, ສ້າງຕາໜ່າງການຄ້າ, ການຂົນສົ່ງ, ການທະນາຄານ, ການໂຮງແຮມ, ບ້ານພັກ, ໂຮງແຮມ, ການທ່ອງທ່ຽວ ແລະ ອື່ນໆອີກ ສະນັ້ນ , ຈຶ່ງມີການຮັບເອົາແຮງງານທີ່ປະກອບການໃນແຕ່ລະຂົງເຂດ (ຂະແໜງການ) ນີ້ຫຼາຍເທົ່າທີ່ຄວນ ໂດຍເຮັດໃຫ້ຈຳນວນສະຖິຕິຂອງການປະກອບອາຊີບນີ້ນັບມື້ນັບຂະຫຍາຍຕົວເພີ່ມຂຶ້ນຢ່າງວ່ອງໄວໃຫ້ທັນກັບເວລາ (Chitavong, 2023).

ການຈ້າງງານຂອງຜູ້ປະກອບການໃນຂະແໜງການຕ່າງໆ ລ້ວນແຕ່ມີບົດບາດສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມໂດຍສະເພາະແມ່ນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ປະກອບສ່ວນເຂົ້າ ໃນການສ້າງວຽກເຮັດງານທຳ, ສ້າງລາຍຮັບ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນ ກໍ່ຄື ການສ້າງປະຖົມປັດໄຈໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທື່ອລະກ້າວ, ເຮັດໃຫ້ເສດຖະກິດຂອງເມືອງ, ຂອງແຂວງ, ຂອງຊາດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການພັດທະນາການຈ້າງງານຂອງຜູ້ປະກອບການໃນຂະແໜງບໍລິການ ນອກຈາກຈະມີຕົ້ນທຶນຕ່ຳແລ້ວ ຍັງເນັ້ນການນຳໃຊ້ທ່າແຮງຊັບພະຍາກອນພາຍໃນເປັນຫຼັກ (Bundakone & Chansouk 2012). ນອກຈາກນັ້ນ, ທຸລະກິດການບໍລິການ ຍັງສາມາດປັບຕົວໄດ້ໄວກັບສະພາບການທີ່ມີການປ່ຽນແປງ ໂດຍສະເພາະແມ່ນ ໃນເວລາເກີດມີວິກິດການທາງດ້ານເສດຖະກິດ ແລະ ການເງິນ, ຍ້ອນເຫັນ ໄດ້ຄວາມສຳຄັນຂອງການຈ້າງງານຂອງຜູ້ປະກອບການໃນທຸລະກິດການບໍລິການ, ບັນດາປະເທດສ່ວນໃຫຍ່ໃນໂລກໂດຍສະເພາະໃນພາກພື້ນອາຊຽນ ຈຶ່ງໄດ້ເອົາໃຈໃສ່ຕໍ່ການສົ່ງເສີມ ແລະ ພັດທະນາຜູ້ປະກອບການທຸລະກິດຂະໜາດນ້ອຍ ແລະ ກາງ ໂດຍໄດ້ວາງນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາທີ່ເປັນອັນສະເພາະເຈາະຈົງສຳລັບການສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງ, ລວມທັງການສ້າງໃຫ້ມີກົນໄກ ແລະ ສ້າງໜ່ວຍງານສະເພາະຂຶ້ນມາເພື່ອ ຮັບຜິດຊອບຢ່າງຈິງຈັງ ແລະ ເປັນລະບົບຕໍ່ເນື່ອງ (Siphanthong et al., 2024). ໃນບັນດາ ປະເທດສະມາຊິກອາຊຽນ ທຸລະກິດຂະໜາດນ້ອຍ ແລະ ກາງ, ລວມທັງການຈ້າງງານຂອງຜູ້ປະກອບການການບໍລິການເປັນອົງປະກອບທີ່ສຳຄັນຂອງເສດຖະກິດ (Phiphavong, 2017). ການຈ້າງງານຈະມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ ເນື່ອງຈາກວ່າເມື່ອມີການຈ້າງງານ

*Copyright © 2025 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/)*

ເພີ່ມຂຶ້ນ, ຕຳແໜ່ງງານຂອງການຈ້າງງານກໍ່ເພີ່ມຂຶ້ນ, ອັດຕາການວ່າງງານຢູ່ໃນລະດັບຕ່ຳ ເຮັດໃຫ້ແຮງງານທີ່ຖືກຈ້າງດັ່ງກ່າວມີລາຍໄດ້, ມີອຳນາດໃນການຊື້ເພື່ອຈັບຈ່າຍໃຊ້ສອຍຕາມຄວາມຕ້ອງການ ແລະ ຄວາມພໍໃຈຂອງຕົນເອງເຊິ່ງເປັນການກະຕຸ້ນທາງດ້ານເສດຖະກິດທີ່ດີໃຫ້ແກ່ເສດຖະກິດມວນລວມຂອງຊາດ (Deephai, 2021).

ທຸລະກິດບໍລິການກໍ່ເປັນອີກຂະແໜງໜຶ່ງທີ່ໄດ້ສ້າງລາຍຮັບໃຫ້ແກ່ແຂວງກໍ່ຄືປະຊາຊົນພາຍໃນເມືອງໄດ້ມີວຽກເຮັດງານທຳ. ລັດຖະບານ ໄດ້ມີນະໂຍບາຍກ່ຽວກັບການເອື້ອອຳນວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວໂດຍອີງການມະຫາພາກຄຸ້ມຄອງການທ່ອງທ່ຽວອະນຸຍາດໃຫ້ສ້າງຕັ້ງສະມາຄົມທຸລະກິດທ່ອງທ່ຽວ, ສະມາຄົມໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ ເປີດກວ້າງການລົງທຶນໃນທຸລະກິດການບໍລິການ ການທ່ອງທ່ຽວກັບຕ່າງປະເທດ ອັນໄດ້ເຮັດໃຫ້ປັດຈຸບັນ ຫົວໜ່ວຍທຸລະກິດໃນອຸດສາຫະກຳການທ່ອງທ່ຽວລາວ ນັບມື້ນັບເພີ່ມ ແລະ ຂະຫຍາຍຕົວ ເປັນຮູບເປັນຮ່າງຂຶ້ນເທື່ອລະກ້າວ (Souksavath, 2008).

ໃນໄລຍະຜ່ານມາເຫັນໄດ້ວ່າ ການຈ້າງງານໃນ ທຸລະກິດບໍລິການ ແມ່ນຍັງມີຄວາມຕ້ອງການຈ້າງງານຫຼາຍທີ່ສຸດ. ເພາະສະນັ້ນການຈ້າງງານໃນທຸລະກິດບໍລິການ ຈຶ່ງບໍ່ເປັນພຽງແຕ່ການຊອກຫາແຮງງານ ມາປະກອບໃສ່ ຕຳແໜ່ງທີ່ຫວ່າງເທົ່ານັ້ນ ແຕ່ມັນເປັນການລົງທຶນໃນບຸກຄະລາກອນທີ່ຈະຂັບເຄື່ອນໃຫ້ທຸລະກິດຂະຫຍາຍຕົວໄດ້ ເພາະແຮງງານເຫຼົ່ານີ້ເປັນຜູ້ສົ່ງມອບປະສົບການຕົວຈິງໃຫ້ກັບລູກຄ້າ. ປັດຈຸບັນນະຄອນຫຼວງພະບາງກຳລັງພົບກັບບັນຫາການຂາດແຄນດ້ານປະລິມານແຮງງານຍ້ອນຂຶ້ນຂອງຄວາມຕ້ອງການ: ທຸລະກິດບໍລິການເຕີບໂຕຢ່າງໄວວາ ແຕ່ແຮງງານມີຈຳນວນຈຳກັດ, ທຸລະກິດຕ່າງໆແຂ່ງຂັນກັນຫາແຮງງານທີ່ມີຢູ່ຈຳກັດ, ແຮງງານທີ່ມີທັກສະໄປເຮັດວຽກຕ່າງປະເທດ ຫຼື ນະຄອນຫລວງວຽງຈັນ. ແຮງງານທີ່ມີຢູ່ຂາດທັກສະທີ່ທຸລະກິດຕ້ອງການ, ແຮງງານສ່ວນຫຼາຍມີການສຶກສາພື້ນຖານ, ຂາດການຝຶກອົບຮົມວິຊາຊີບ, ແຮງງານໃໝ່ຂາດປະສົບການການເຮັດວຽກໃນຂະແໜງບໍລິການ, ຂາດພະນັກງານແມ່ບ້ານທີ່ມີປະສົບການ, ຂາດພະນັກງານຕ້ອນຮັບທີ່ສາມາດສື່ສານພາສາອັງກິດໄດ້, ຂາດພະນັກງານບຳລຸງຮັກສາ ແລະການຄຸ້ມຄອງ, ຂາດພໍ່ຄົວທີ່ມີທັກສະ ໂດຍສະເພາະອາຫານສາກົນ, ຂາດພະນັກງານບໍລິການທີ່ມີມາດຕະຖານ, ຂາດຜູ້ຈັດການທີ່ເຂົ້າໃຈລະບົບການບໍລິຫານ, ຂາດໄກດ໌ທ່ອງທ່ຽວທີ່ມີລິຂະສິດ ແລະຄວາມຮູ້ເລິກເຊິ່ງ, ຂາດພະນັກງານບໍລິສັດນຳທ່ຽວທີ່ສາມາດສື່ສານຫຼາຍພາສາ, ຂາດຜູ້ຊ່ຽວຊານດ້ານການຕະຫຼາດທ່ອງທ່ຽວດິຈິຕອນ, ຂາດພະນັກງານຂາຍທີ່ມີທັກສະການຂາຍ, ຂາດຜູ້ຈັດການທີ່ເຂົ້າໃຈລະບົບການເງິນ ແລະບັນຊີ, ຂາດພະນັກງານບໍລິການລູກຄ້າທີ່ມີຄຸນນະພາບ, ລະບົບການສຶກສາຍັງບໍ່ສອດຄ່ອງກັບຄວາມຕ້ອງການຕະຫຼາດ, ຂາດການເຊື່ອມຕໍ່ລະຫວ່າງໂຮງຮຽນ ແລະພາກສ່ວນທຸລະກິດ. ສາເຫດດ້ານເສດຖະກິດ ແລະສັງຄົມ ຄ່າຈ້າງແຮງງານຍັງຕ່ຳກວ່າປະເທດເພື່ອນບ້ານ, ໂອກາດກ້າວໜ້າໃນການເຮັດວຽກຈຳກັດ, ການຂາດລະບົບສະຫວັດດີການສັງຄົມທີ່ດີ. ສາເຫດດ້ານຕະຫຼາດແຮງງານ ຂໍ້ມູນຂ່າວສານກ່ຽວກັບໂອກາດເຮັດວຽກບໍ່ທົ່ວເຖິງ, ຂາດກົນໄກເຊື່ອມຕໍ່ລະຫວ່າງຜູ້ຫາງານ ແລະນາຍຈ້າງ, ມາດຕະຖານການເຮັດວຽກບໍ່ຊັດເຈນ (Vannalar, 2026).

ເມື່ອເຫັນໄດ້ວ່າການຈ້າງງານໃນຂົງເຂດຫົວໜ່ວຍທຸລະກິດບໍລິການ ມີຄວາມສຳຄັນ ເພາະແຮງງານ ຫຼື ພະນັກງານທີ່ໃຫ້ບໍລິການເປັນດ່ານໜ້າທີ່ສ້າງປະສົບການໃຫ້ກັບລູກຄ້າໂດຍກົງ. ສະນັ້ນ, ພະນັກງານທີ່ດີຈະຊ່ວຍສ້າງຖານລູກຄ້າໃໝ່ ເພີ່ມຍອດຂາຍ ຜ່ານການຕ້ອນຮັບທີ່ດີ ແລະ ການສ້າງພາບລັກທີ່ດີໃຫ້ກັບທຸລະກິດບໍລິການ ເຊິ່ງຈະນຳໄປສູ່ການບອກຕໍ່, ເພື່ອໃຫ້ເຂົ້າໃຈຢ່າງຈະແຈ້ງ ແລະ ເລິກເຊິ່ງເຖິງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການ, ດັ່ງນັ້ນ, ເພື່ອເປັນການເຮັດໃຫ້ການດຳເນີນການຄົ້ນຄວ້າວິໄຈຄັ້ງນີ້ ເປັນໄປຕາມເປົ້າໝາຍ ແລະ ສະດວກຕໍ່ການຄົ້ນຄວ້າວິໄຈຈຶ່ງໄດ້ກຳນົດຈຸດປະສົງຂອງການຄົ້ນຄວ້າວິໄຈຄື: 1) ຄວາມຄິດເຫັນຕໍ່ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ແລະ 2) ປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ການສຶກສາໄດ້ກຳນົດເອົາປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ ແມ່ນ ຜູ້ປະກອບການທຸລະກິດບໍລິການ ໃນນະຄອນຫຼວງພະບາງ (ຜູ້ປະກອບການທຸລະກິດບໍລິການ 1 ຄົນ/1 ແຫ່ງ). ເຊິ່ງປັດຈຸບັນ ຈຳນວນທຸລະກິດບໍລິການ ໃນນະຄອນຫຼວງພະບາງ ເຊິ່ງປະກອບມີ 6 ປະເພດທຸລະກິດ ແລະ 710 ແຫ່ງ (Department of Industry and Commerce, 2025) ເຊິ່ງສາມາດສຸ່ມກຸ່ມຕົວຢ່າງ ຕາມແບບວິທີຂອງ Taro Yamane (Yamane, 1967) ໄດ້ດັ່ງນີ້: $n=\frac{N}{1+N(e^2)}$

$n$ = ແມ່ນຂະໜາດຕົວຢ່າງທີ່ຕ້ອງການ

$N$ = ແມ່ນຈຳນວນປະຊາກອນທັງໝົດ

$e^2$ = ຄ່າຄວາມຄາດເຄື່ອນຂອງຂະໜາດປະຊາກອນ (ກຳນົດ 5% ຫຼື 0.05)

ແທນຕາມສູດ:

$$n=\frac{710}{1+710(0.05)^2}=\frac{710}{2.775}=255.85$$

ເພື່ອຄວາມຊັດເຈນ ແລະ ປ້ອງກັນການຄາດເຄື່ອນໃນການເກັບແບບສອບຖາມຕົວຈິງ; ດັ່ງນັ້ນ, ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາລວມເປັນ 256 ແຫ່ງ (ຜູ້ປະກອບການທຸລະກິດບໍລິການ 1 ຄົນ/1 ແຫ່ງ). ສັດສ່ວນການກຳນົດຂະໜາດຂອງກຸ່ມຕົວຢ່າງ ແມ່ນໄດ້ຈັດແບ່ງຕາມແບບໂຄຕ້າ ຂອງແຕ່ລະປະເພດທຸລະກິດເຊິ່ງສະແດງອອກໃນຕາຕະລາງຂ້າງລຸ່ມນີ້:

ຕາຕະລາງທີ 1: ສັດສ່ວນການກຳນົດຂະໜາດຂອງກຸ່ມຕົວຢ່າງຂອງແຕ່ລະປະເພດທຸລະກິດບໍລິການ

| ລດ | ລາຍການ | ປະຊາກອນ | ກຸ່ມຕົວຢ່າງ |
|---|---|---|---|
| 1 | ເຮືອນພັກ | 312 | 113 |
| 2 | ຮ້ານນວດ ແລະ ສະປາ | 35 | 13 |
| 3 | ບໍລິສັດທ່ອງທ່ຽວ | 134 | 48 |
| 4 | ຮ້ານອາຫານ | 62 | 22 |
| 5 | ໂຮງແຮມ ແລະ ລີສອດ | 151 | 54 |
| 6 | ບັນເທີງ ແລະ ຄາຣາໂອເກະ | 16 | 6 |
| | **ລວມທັງໝົດ** | **710** | **256** |

**2.2 ເຄື່ອງມືທີ່ໃຊ້ໃນການວິໄຈ**

ການສຶກສານີ້ໄດ້ນຳໃຊ້ວິທີການສຶກສາແບບປະລິມານ; ໂດຍນຳໃຊ້ໃຊ້ແບບສອບຖາມທີ່ມີລັກສະນະປາຍປິດ ແລະ ປາຍເປີດ ເຊິ່ງແບ່ງອອກເປັນ 2 ສ່ວນທີ່ສຳຄັນຫຼັກໆທີ່ຕອບສະໜອງການຄົ້ນຄວ້າຄັ້ງນີ້ຄື: ສ່ວນທີ 1 ຂໍ້ມູນກ່ຽວກັບຄວາມຕ້ອງການຈ້າງງານງານຂອງຜູ້ປະກອບການໃນນະຄອນຫຼວງພະບາງ ໂດຍກຳນົດກຳນົດເປັນ Choice ໃຫ້ເລືອກ; ສ່ວນທີ 2 ຂໍ້ມູນກ່ຽວກັບຄວາມຄິດເຫັນຕໍ່ລະດັບຄວາມສຳຄັນຂອງບັນດາປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ແມ່ນໄດ້ກຳນົດເປັນຄ່າລະດັບ (Likert scale) ແລະ ມີເກນການວັດແທກຄ່າຄະແນນປະເມີນ, ຊ່ວງຄ່າຄະແນນສະເລ່ຍ ແລະ ຄວາມໝາຍຊ່ວງຄະແນນສະເລ່ຍ ດັ່ງນີ້:

ຕາຕະລາງທີ 2: ເກນການວັດແທກຄ່າຄະແນນປະເມີນ, ຊ່ວງຄ່າຄະແນນສະເລ່ຍ ແລະ ຄວາມໝາຍຊ່ວງຄະແນນສະເລ່ຍ

| ຄະແນນ | ຊ່ວງຄ່າຄະແນນສະເລ່ຍ | ຄວາມໝາຍ |
|---|---|---|
| 5 | 4.21 ຫາ 5.00 | ຫຼາຍທີ່ສຸດ |
| 4 | 3.41 ຫາ 4.20 | ຫຼາຍ |
| 3 | 2.61 ຫາ 3.40 | ປານກາງ |
| 2 | 1.81 ຫາ 2.60 | ໜ້ອຍ |
| 1 | 1.00 ຫາ 1.80 | ໜ້ອຍທີ່ສຸດ |

ການສ້າງແບບສອບຖາມແມ່ນໄດ້ນຳໃຊ້ທິດສະດີການຈ້າງງານ, ທິດສະດີອຸປະສົງແຮງງານ ແລະ ບົດຄົ້ນຄວ້າທີ່ເຮັດການສຶກສາໃນຫົວຂໍ້ ຫຼື ປະເດັນທີ່ຄ້າຍຄືກັນ ມາເປັນແບບຢ່າງອ້າງອີງ ພາຍຫຼັງສຳເລັດແລ້ວໄດ້ນຳແບບສອບຖາມໄປຜ່ານຜູ້ຊ່ຽວຊານສະເພາະດ້ານ ຈຳນວນ 3 ທ່ານ (ສາຂາວິຊາບໍລິຫານທຸລະກິດ 1 ທ່ານ, ສາຂາວິຊາເສດຖະສາດ 1 ທ່ານ ແລະ ສາຂາວິຊາບໍລິຫານຊັບພະຍາກອນມະນຸດ 1 ທ່ານ) ເພື່ອຫາຄ່າດັດສະນີຄວາມສອດຄ່ອງລະຫວ່າງເນື້ອໃນຄຳຖາມ ກັບຈຸດປະສົງ (Index of Item-Objective Congruence ຫຼື IOC) ຂອງທຸກຄຳຖາມໃນແບບສອບຖາມໄດ້ຄ່າສະເລ່ຍເທົ່າກັບ 0.75 ເຊິ່ງໃຫຍ່ກວ່າ 0.50 ແລະ ຜ່ານການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມດ້ວຍການນຳເອົາແບບສອບຖາມໄປທົດລອງ (Try out) ໃນກຸ່ມຕົວຢ່າງທີ່ເປັນເປົ້າໝາຍຈຳນວນ 40 ສະບັບ ຫຼັງຈາກນັ້ນຈຶ່ງເອົາແບບສອບຖາມມາປ້ອນຂໍ້ມູນ ຫຼັງຈາກປ້ອນຂໍ້ມູນສຳເລັດຈຶ່ງໄດ້ດຳເນີນການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມດ້ວຍການຫາຄ່າສຳປະສິດ Cronbach's Alpha ມີຄ່າເທົ່າກັບ 0.928 ຫຼື 92.8% ເຊິ່ງສູງກວ່າເກນມາດຕະຖານທີ່ກຳນົດໄວ້ ຄື 80% (Yamane, 1967). ສະແດງວ່າເນື້ອໃນແບບສອບຖາມສອດຄ່ອງກັບຈຸດປະສົງໃນການຄົ້ນຄວ້າ ແລະ ສາມາດນຳໄປໃຊ້ເປັນເຄື່ອງມືໃນການລົງເກັບຂໍ້ມູນໃນຂັ້ນຕໍ່ໄປໄດ້.

**2.3 ການເກັບລວບລວມຂໍ້ມູນ**

ໃນການເກັບກຳ ແລະ ລວບລວມຂໍ້ມູນ ຜູ້ສຶກສາໄດ້ມີການລົງເກັບກຳຂໍ້ມູນຕົວຈິງຈາກຜູ້ປະກອບການທຸລະກິດບໍລິການ ໃນນະຄອນຫຼວງພະບາງ ໂດຍສະເພາະແມ່ນຂໍ້ມູນກ່ຽວກັບບັນດາປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການ. ໂດຍໃຊ້ໄລຍະເວລາ 2 ເດືອນ ຄື: ເລີ່ມແຕ່ເດືອນ ມັງກອນ ຫາ ເດືອນ ກຸມພາ ປີ 2026 ດ້ວຍການນຳແບບສອບຖາມລົງໄປແຈກຢາຍໃຫ້ກັບຜູ້ປະກອບການທຸລະກິດບໍລິການທີ່ເປັນຕົວແທນຂອງກຸ່ມຕົວຢ່າງເປົ້າໝາຍ ຈຳນວນ 256 ສະບັບ ແລະ ເກັບຄືນໄດ້ທັງໝົດ 256 ສະບັບ (ສົມບູນ); ພ້ອມທັງໄດ້ອະທິບາຍລາຍລະອຽດກ່ຽວກັບແຕ່ລະຂໍ້ຄຳຖາມໃນແບບສອບຖາມເພື່ອໃຫ້ຜູ້ຕອບແບບສອບຖາມມີຄວາມເຂົ້າໃຈ ແລະ ໃຫ້ຂໍ້ມູນໄດ້ຖືກຕ້ອງຕາມຈຸດປະສົງທີ່ຕ້ອງການ ແລະ ເກັບແບບສອບຖາມຄືນພ້ອມພາຍຫຼັງສຳເລັດ.

**2.4 ການວິເຄາະຂໍ້ມູນ**

ພາຍຫຼັງເກັບກຳຂໍ້ມູນໄດ້ສຳເລັດແລ້ວ ແມ່ນໄດ້ນຳຂໍ້ມູນມາວິເຄາະ ເພື່ອຊອກຫາຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (Standard division) ໂດຍນຳສະເໜີເປັນຕາຕະລາງສຳລັບຂໍ້ມູນຄວາມຄິດເຫັນຕໍ່ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ; ສ່ວນແບບຈຳລອງທີ່ໃຊ້ໃນການວິເຄາະປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ແມ່ນຈະວິເຄາະໂດຍການນຳໃຊ້ແບບຈຳລອງເສັ້ນການຖົດຖອຍແບບ Multiple regression ດ້ວຍວິທີ Ordinary Least Square (Inthakesone, 2008) ເຂົ້າໃນການວິເຄາະຂໍ້ມູນ ແລະ ໄດ້ມີການນຳໃຊ້ສຳປະສິດສະຫະສຳພັນເຂົ້າໃນການກວດສອບຄວາມສຳພັນກັນລະຫວ່າງຕົວປ່ຽນ ເຊິ່ງສະແດງອອກໃນຄ່າການທົດສອບຄ່າ t-statistic ແລະ F-statistic ໂດຍການວິເຄາະຂໍ້ມູນຜ່ານໂປຼແກຼມສຳເລັດຮູບທາງສະຖິຕິ ແລະ ໄດ້ມີການກຳນົດຄ່າລະດັບຄວາມສຳຄັນ ຄື $^{*}\text{sig} \le 0.1$ $^{**}\text{sig} \le 0.05$ $^{***}\text{sig} \le 0.01$.

**ແບບຈຳລອງທາງຄະນິດສາດ**

$$Y = f[X_1,\ X_2,\ X_3,\quad X_4]$$

**ແບບຈຳລອງທາງເສດຖະມິຕິ (Econometric Model)**

$$\hat{Y}_i = \beta_0 + \beta_1 X_1 + \beta_2 X_2 + \beta_3 X_3 + \beta_4 X_4 + \varepsilon_i ..... (1)$$

ໃນແບບຈຳລອງສະແດງເຖິງການພົວພັນລະຫວ່າງປັດໄຈທີ່ສົ່ງຜົນ ກັບ ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ສະແດງໃນຕາຕະລາງລຸ່ມນີ້:

ຕາຕະລາງທີ 3: ຕົວປ່ຽນ ທີ່ໃຊ້ໃນແບບຈຳລອງ

| ລ/ດ | ຕົວປ່ຽນ | ຄວາມໝາຍຂອງຕົວປ່ຽນ |
|---|---|---|
| 1 | $Y$ | ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການ |
| 2 | $X_1$ | ປັດໄຈດ້ານບຸກຄະລິກກະພາບ |
| 3 | $X_2$ | ປັດໄຈດ້ານຄວາມຮູ້ ແລະ ຄວາມສາມາດ |
| 4 | $X_3$ | ປັດໄຈທາງດ້ານທັກສະຂອງແຮງງານ |
| 5 | $X_4$ | ປັດໄຈດ້ານວິຊາສະເພາະຂອງແຮງງານ |

## 3. ຜົນໄດ້ຮັບ

### 3.1 ຄວາມຄິດເຫັນຕໍ່ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ

ຈາກຜົນການວິເຄາະຄວາມຄິດເຫັນຕໍ່ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ພົບວ່າ ໂດຍລວມ ຜູ້ປະກອບການມີຄວາມຄິດເຫັນຕໍ່ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານແມ່ນມີຄ່າ $\bar{X}$ = 3.32 ແລະ SD = 0.49 ໃນ (ຕາຕະລາງທີ 1) ໂດຍແຍກເປັນແຕ່ລະດ້ານດັ່ງນີ້:

ດ້ານບຸກຄະລິກກະພາບ ຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ໃຫ້ຄວາມສຳຄັນ ຕໍ່ກັບ ໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ ເຊິ່ງມີ $\bar{X}$ = 4.50 ແລະ SD = 0.39 ເຊິ່ງມີລາຍລະອຽດດັ່ງນີ້: ຄວາມມີນ້ຳໃຈຊ່ວຍເຫຼືອເພື່ອນຮ່ວມງານ ຢູ່ໃນລະດັບຫຼາຍທີ່ສຸດ ເຊິ່ງມີຄ່າ $\bar{X}$ = 4.84 ແລະ SD = 0.61, ຄວາມຊື່ສັດສຸຈະລິດ ແລະ ຮັບຜິດຊອບໃນໜ້າທີ່ ຢູ່ໃນລະດັບຫຼາຍທີ່ສຸດ $\bar{X}$ = 4.83 ແລະ SD = 0.55, ປະສົບການໃນການເຮັດວຽກ ຢູ່ໃນລະດັບຫຼາຍທີ່ສຸດ $\bar{X}$ = 4.72 ແລະ SD = 0.53, ຄວາມສາມາດໃນການເຮັດວຽກເປັນທີມ ຢູ່ໃນລະດັບຫຼາຍທີ່ສຸດ $\bar{X}$ = 4.71 ແລະ SD = 0.72, ຄວາມສາມາດໃນການຄວບຄຸມອາລົມ ຢູ່ໃນລະດັບຫຼາຍທີ່ສຸດ $\bar{X}$ = 4.66 ແລະ SD = 0.64, ຄວາມຫ້າວຫັນ, ມຸ່ງໝັ້ນ, ກະຕືລືລົ້ນໃນການເຮັດວຽກ ຢູ່ໃນລະດັບຫຼາຍທີ່ສຸດ $\bar{X}$ = 4.66 ແລະ SD = 0.71, ມະນຸດສຳພັນທີ່ດີ ຢູ່ໃນລະດັບຫຼາຍທີ່ສຸດ $\bar{X}$ = 4.61 ແລະ SD = 0.79, ການຮັບຟັງຄວາມຄິດເຫັນຂອງຜູ້ອື່ນ ຢູ່ໃນລະດັບຫຼາຍ $\bar{X}$ = 4.45 ແລະ SD = 0.70, ມີຄວາມໜ້າເຊື່ອຖື, ແຕ່ງກາຍເໝາະສົມ ຢູ່ໃນລະດັບຫຼາຍ $\bar{X}$ = 4.39 ແລະ SD = 0.72, ການປະຕິບັດຕາມກົດລະບຽບຂອງອົງກອນ ຢູ່ໃນລະດັບຫຼາຍ $\bar{X}$ = 4.34 ແລະ SD = 0.91, ຄວາມກະຕືລືລົ້ນໃນການບໍລິການ ແລະ ແກ້ໄຂບັນຫາ ຢູ່ໃນລະດັບຫຼາຍ $\bar{X}$ = 4.27 ແລະ SD = 0.80, ຄວາມເຄົາລົບຕໍ່ຜູ້ຈ້າງ ແລະ ໃຫ້ກຽດເພື່ອນຮ່ວມງານ ຢູ່ໃນລະດັບຫຼາຍ $\bar{X}$ = 4.25 ແລະ SD = 0.74, ການປະຕິບັດຕາມໜ້າທີ່ທີ່ໄດ້ຮັບມອບໝາຍ ຢູ່ໃນລະດັບຫຼາຍ $\bar{X}$ = 4.19 ແລະ SD = 0.93, ແລະ ດ້ານຄວາມສາມາດໃນການເປັນຜູ້ນຳທີມງານ ຢູ່ໃນລະດັບຫຼາຍ $\bar{X}$ = 4.11 ແລະ SD = 0.86.

ດ້ານຄວາມຮູ້ ແລະ ຄວາມສາມາດ ໂດຍລວມຢູ່ໃນລະດັບໜ້ອຍ ເຊິ່ງມີ $\bar{X}$ = 2.44 ແລະ SD = 0.51 ເຊິ່ງມີລາຍລະອຽດດັ່ງນີ້: ຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ໃຫ້ຄວາມສຳຄັນສູງສຸດ ໃນດ້ານຄວາມຮູ້ ແລະ ຄວາມສາມາດຂອງແຮງງານ ແມ່ນສາມາດນຳໃຊ້ຄວາມຮູ້ມາປະຍຸກ ແລະ ມີຄວາມຄິດສ້າງສັນ ຢູ່ໃນລະດັບຫຼາຍ ເຊິ່ງມີຄ່າ $\bar{X}$ = 3.80 ແລະ S.D. = 0.99, ດ້ານຄວາມສາມາດໃນການແກ້ໄຂບັນຫາສະເພາະໜ້າ ຢູ່ໃນລະດັບຫຼາຍ $\bar{X}$ = 3.65 ແລະ S.D. = 0.93, ດ້ານຄວາມຮູ້ໃນສາຂາວິຊາທີ່ກ່ຽວຂ້ອງ ຢູ່ໃນລະດັບຫຼາຍ $\bar{X}$ = 3.64 ແລະ S.D. = 1.29, ດ້ານຄວາມສາມາດໃນການປັບຕົວໃຫ້ເຂົ້າກັບສະພາບແວດລ້ອມ ຢູ່ໃນລະດັບປານກາງ $\bar{X}$ = 3.39 ແລະ S.D. = 0.87, ດ້ານຄວາມຮູ້ດ້ານພາສາຕ່າງປະເທດ ຢູ່ໃນລະດັບປານກາງ $\bar{X}$ = 3.35 ແລະ S.D. = 0.91, ດ້ານຄວາມສາມາດໃນການວາງແຜນເຮັດວຽກຢ່າງເປັນລະບົບ ຢູ່ໃນລະດັບປານກາງ $\bar{X}$ = 3.28 ແລະ S.D. = 0.91, ແລະ ດ້ານຄວາມສາມາດໃນການພັດທະນາ ແລະ ຮຽນຮູ້ສິ່ງໃໝ່ໆ ຢູ່ໃນລະດັບປານກາງ $\bar{X}$ = 3.18 ແລະ S.D. = 1.04.

ສຳລັບດ້ານທັກສະຂອງແຮງງານ ໂດຍລວມຜູ້ປະກອບການແມ່ນໃຫ້ຄວາມສຳຄັນຢູ່ໃນລະດັບປານກາງ ເຊິ່ງມີ $\bar{X}$ = 2.98 ແລະ SD = 0.52 ເຊິ່ງມີລາຍລະອຽດດັ່ງນີ້: ດ້ານຄວາມສາມາດໃນການສື່ສານ (ເວົ້າ, ຂຽນ) ຢູ່ໃນລະດັບຫຼາຍທີ່ສຸດ ເຊິ່ງມີຄ່າ $\bar{X}$ = 4.65 ແລະ S.D. = 0.70, ການຕິດຕາມເຕັກໂນໂລຢີ ແລະ ຄວາມຮູ້ໃໝ່ໆ ຢູ່ໃນລະດັບປານກາງ ມີຄ່າ $\bar{X}$ = 3.07 ແລະ S.D. = 1.00, ດ້ານຄວາມສາມາດໃນການນຳໃຊ້ຄອມພິວເຕີ ຢູ່ໃນລະດັບໜ້ອຍ $\bar{X}$ = 2.48 ແລະ S.D. = 0.89, ການນຳໃຊ້ເຕັກໂນໂລຢີເຂົ້າໃນການສື່ສານ ຢູ່ໃນລະດັບໜ້ອຍ $\bar{X}$ = 2.37 ແລະ S.D. = 0.88, ແລະ ການນຳໃຊ້ຄອມພິວເຕີເຂົ້າໃນການຄິດໄລ່, ວິເຄາະຂໍ້ມູນ ຢູ່ໃນລະດັບໜ້ອຍ $\bar{X}$ = 2.34 ແລະ S.D. = 1.01.

ດ້ານວິຊາສະເພາະຂອງແຮງງານ ຜູ້ປະກອບການໃຫ້ຄວາມສຳຄັນ ຢູ່ໃນລະດັບປານກາງ ເຊິ່ງມີ $\bar{X}$ = 3.35 ແລະ S.D. = 0.48 ເຊິ່ງມີລາຍລະອຽດດັ່ງນີ້: ວິຊາສະເພາະດ້ານບໍລິຫານການທ່ອງທ່ຽວ, ໂຮງແຮມ ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າ $\bar{X}$ = 4.39 ແລະ S.D. = 1.02, ດ້ານການປຸງແຕ່ງອາຫານ ຢູ່ໃນລະດັບຫຼາຍ $\bar{X}$ = 3.97 ແລະ S.D. = 1.20, ດ້ານພາສາຕ່າງປະເທດ ຢູ່ໃນລະດັບປານກາງ $\bar{X}$ = 3.10 ແລະ S.D. = 1.58, ດ້ານບັນຊີ-ການເງິນ ຢູ່ໃນລະດັບປານກາງ $\bar{X}$ = 2.96 ແລະ S.D. = 1.29, ດ້ານການບໍລິຫານທຸລະກິດ ຢູ່ໃນລະດັບປານກາງ $\bar{X}$ = 2.91 ແລະ S.D. = 1.29, ດ້ານວິສະວະກຳໄຟຟ້າ ຢູ່ໃນລະດັບໜ້ອຍ $\bar{X}$ = 1.71 ແລະ S.D. = 0.87, ດ້ານເສດຖະສາດ ຢູ່ໃນລະດັບໜ້ອຍທີ່ສຸດ $\bar{X}$ = 1.50 ແລະ S.D. = 0.76, ດ້ານໄອທີ ຢູ່ໃນລະດັບໜ້ອຍທີ່ສຸດ $\bar{X}$ = 1.45 ແລະ S.D. = 0.80, ດ້ານການກະສິກຳ ຢູ່ໃນລະດັບໜ້ອຍທີ່ສຸດ $\bar{X}$ = 1.38 ແລະ S.D. = 0.71, ແລະ ດ້ານສະຖາປັດຕະຍາກຳສາດ ຢູ່ໃນລະດັບໜ້ອຍທີ່ສຸດ $\bar{X}$ = 1.05 ແລະ S.D. = 0.35.

### 3.2 ປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ

ຈາກຜົນການວິເຄາະ ປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ (ຕາຕະລາງທີ 2) ພົບວ່າ: ການທົດສອບຄວາມສຳພັນກັນເອງຂອງຕົວປ່ຽນດ້ວຍຄ່າ Durbin-Watson ເທົ່າກັບ 1.679 ເຊິ່ງຢູ່ໃນຫວ່າງແຕ່ 1.5-2.0 ນັ້ນໝາຍຄວາມວ່າບັນດາປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງທີ່ໄດ້ກຳນົດຂຶ້ນມາເພື່ອໃຊ້ໃນການສຶກສາຄັ້ງນີ້ແມ່ນມີຄວາມເປັນອິດສະຫຼະຕໍ່ກັນສູງ ແລະ ສາມາດນຳໃຊ້ເຂົ້າໃນການວິເຄາະຂັ້ນຕໍ່ໄປໄດ້. ຄ່າສະຖິຕິທົດສອບ F-Satistics ຫຼື ການທົດສອບຄວາມຜັນຜວນຂອງຕົວປ່ຽນ (F = 11.421) ແລະ ມີລະດັບຄວາມສຳຄັນທາງສະຖິຕິ Sig = 0.000<0.01, ສະແດງວ່າ: ແບບຈຳລອງປັດໄຈທີ່ສົ່ງຜົນຕໍ່ຄວາມ

ຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງມີຢ່າງໜ້ອຍ 1 ປັດໄຈສິ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ດ້ວຍລະດັບຄວາມເຊື່ອໝັ້ນ 99%. ແລະ ຈາກການວິເຄາະຄ່າສໍາປະສິດການຕັດສິນໃຈດັດແກ້ (Adjusted R Square) ມີຄ່າເທົ່າກັບ 0.807 ເຊິ່ງມີຄວາມໝາຍວ່າບັນດາຕົວປ່ຽນອິດສະຫຼະທີ່ເຂົ້າໃນແບບລອງດັ່ງກ່າວນີ້ ສາມາດອະທິບາຍຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການ ໃນນະຄອນຫຼວງພະບາງ ໄດ້ສູງເຖິງ 80.7% ແລະ ສ່ວນທີ່ຍັງເຫຼືອ ແມ່ນຂຶ້ນກັບປັດໄຈອື່ນ ຫຼື ຕົວປ່ຽນອິດສະຫຼະຕົວອື່ນໆ ທີ່ບໍ່ໄດ້ນໍາມາສຶກສາ. ດັ່ງນັ້ນ, ສາມາດເວົ້າໄດ້ວ່າແບບຈໍາລອງດັ່ງກ່າວແມ່ນມີຄວາມເປັນໄປໄດ້ຫຼາຍທາງເສດຖະມິຕິ ແລະ ສອດຄ່ອງກັບທິດສະດີທາງເສດຖະສາດ. ເຊິ່ງສາມາດນໍາມາສ້າງແບບຈໍາລອງຄວາມສໍາພັນທາງດ້ານເສດຖະມິຕິໄດ້ດັ່ງນີ້:

$$Y_i = -26.026 + 0.212 X_1 + 0.192X_2 + 0.151X_3 + 0.109X_4$$
$$(-2.007)^{ns} \quad (4.389)^{**} \quad (6.877)^{**} \quad (6.547)^{**} \quad (4.574)^{**}$$

ຕົວເລກໃນວົງເລັບເປັນຄ່າສະຖິຕິ t-statistic

** ແທນໃຫ້ລະດັບຄວາມສໍາຄັນທາງສະຖິຕິ 0.05

ns = ບໍ່ມີຄວາມສໍາຄັນທາງສະຖິຕິ

ການທົດສອບ t-satistics ແມ່ນການທົດສອບວ່າ ແຕ່ລະປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ຫຼື ບໍ່ ເຊິ່ງຈາກການທົດສອບເຫັນວ່າ ແຕ່ລະປັດໄຈທີ່ມີຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການ ຄື:

- ປັດໄຈດ້ານບຸກຄະລິກກະພາບ ($X_1$) ມີຄ່າສໍາປະສິດການຖົດຖອຍ (Unstandardized Coefficients) ເທົ່າກັບ 0.212 ເຊິ່ງສາມາດອະທິບາຍໄດ້ວ່າ: ບຸກຄະລິກກະພາບຂອງແຮງງານ ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນທິດທາງດຽວກັນ ຖ້າແຮງງານມີບຸຄະລິກກະພາບທີ່ດີ ກໍ່ຈະມີໂອກາດໄດ້ຮັບການຈ້າງງານຫຼາຍກວ່າ ດ້ວຍລະດັບຄວາມເຊື່ອໝັ້ນ 95%.
- ປັດໄຈດ້ານຄວາມຮູ້ ແລະ ຄວາມສາມາດ ($X_2$) ມີຄ່າສໍາປະສິດການຖົດຖອຍ (Unstandardized Coefficients) ເທົ່າກັບ 0.192 ເຊິ່ງສາມາດອະທິບາຍໄດ້ວ່າ: ຄວາມຮູ້ ແລະ ຄວາມສາມາດຂອງແຮງງານ ກໍ່ເປັນປັດໄຈໜຶ່ງທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນທິດທາງດຽວກັນ ຖ້າແຮງງານມີຄວາມຮູ້ ແລະ ຄວາມສາມາດທີ່ດີ ກໍ່ຈະມີໂອກາດໄດ້ຮັບການຈ້າງງານຫຼາຍກວ່າ ດ້ວຍລະດັບຄວາມເຊື່ອໝັ້ນ 95%.
- ປັດໄຈທາງດ້ານທັກສະຂອງແຮງງານ ($X_3$) ມີຄ່າສໍາປະສິດການຖົດຖອຍ (Unstandardized Coefficients) ເທົ່າກັບ 0.151 ເຊິ່ງສາມາດອະທິບາຍໄດ້ວ່າ: ທັກສະຂອງແຮງງານສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນທິດທາງດຽວກັນ ຖ້າແຮງງານມີທັກສະເພີ່ມເຕີມເຊັ່ນ: ການນໍາໃຊ້ຄອມພິວເຕີ, ອຸປະກອນເຕັກໂນໂລຊີ...ທີ່ດີ ກໍ່ຈະມີໂອກາດໄດ້ຮັບການພິຈາລະນາເປັນພິເສດຫຼາຍກວ່າ ດ້ວຍລະດັບຄວາມເຊື່ອໝັ້ນ 95%.
- ປັດໄຈດ້ານວິຊາສະເພາະຂອງແຮງງານ ($X_4$) ມີຄ່າສໍາປະສິດການຖົດຖອຍ (Unstandardized Coefficients) ເທົ່າກັບ 0.109 ເຊິ່ງສາມາດອະທິບາຍໄດ້ວ່າ: ລະດັບວິຊາສະເພາະຂອງແຮງງານສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນທິດທາງດຽວກັນ ຖ້າແຮງງານທີ່ຈົບວິຊາສະເພາະທີ່ກ່ຽວຂ້ອງໂດຍກົງເຊັ່ນ: ບັນຊີ, ທ່ອງທ່ຽວ, ໂຮງແຮມ...ກໍ່ຈະໄດ້ຮັບພິຈາລະນາກ່ອນແຮງງານທີ່ຈົບວິຊາສະເພາະທີ່ໃກ້ຄຽງ ດ້ວຍລະດັບຄວາມເຊື່ອໝັ້ນ 95%.

## 4. ວິພາກຜົນ

ຈາກຜົນການວິເຄາະປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ, ສາມາດວິພາກຜົນໄດ້ດັ່ງນີ້:

### 4.1 ຄວາມຄິດເຫັນຕໍ່ລະດັບຄວາມສໍາຄັນຂອງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ

ຈາກການວິເຄາະລະດັບຄວາມສໍາຄັນຂອງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ພົບວ່າຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ໃຫ້ຄວາມສໍາຄັນດ້ານຄວາມຮູ້ວິຊາສະເພາະໂດຍລວມຢູ່ໃນລະດັບໜ້ອຍ ເຊິ່ງໃນດ້ານຄວາມຮູ້ວິຊາສະເພາະນີ້ ຜູ້ປະກອບການຈະໃຫ້ຄວາມສໍາຄັນສູງສຸດແມ່ນມີພຽງແຮງງານທີ່ມີວິຊາສະເພາະດ້ານບໍລິຫານການທ່ອງທ່ຽວ, ໂຮງແຮມ, ຮອງລົງມາແມ່ນມີວິຊາສະເພາະດ້ານການປຸງແຕ່ງອາຫານ ຢູ່ໃນລະດັບຫຼາຍ, ສ່ວນວິຊາສະເພາະດ້ານໄອທີ ຢູ່ໃນລະດັບໜ້ອຍທີ່ສຸດ. ສໍາລັບດ້ານບຸກຄະລິກກະພາບໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ ເຊິ່ງໃນນີ້ຜູ້ປະກອບການໃຫ້ຄວາມສໍາຄັນສູງສຸດແມ່ນມີນໍ້າໃຈຊ່ວຍເຫຼືອເພື່ອນຮ່ວມງານ ຢູ່ໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນມີຄວາມຊື່ສັດສຸຈະລິດ ແລະ ຮັບຜິດຊອບໃນໜ້າທີ່ ຢູ່ໃນລະດັບຫຼາຍທີ່ສຸດເຊັ່ນກັນ ແລະ ປະສົບການໃນການເຮັດວຽກ ຢູ່ໃນລະດັບຫຼາຍທີ່ສຸດ. ໃນດ້ານຄວາມຮູ້ ແລະ ຄວາມສາມາດໂດຍລວມແລ້ວຜູ້ປະກອບການແມ່ນໃຫ້ຄວາມສໍາຄັນ ຢູ່ໃນລະດັບປານກາງ ເຊິ່ງໃນດ້ານນີ້ ແມ່ນຄວາມສາມາດນໍາໃຊ້ຄວາມຮູ້ມາປະຍຸກ ແລະ ມີຄວາມຄິດສ້າງສັນ ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນມີຄວາມສາມາດໃນການແກ້ໄຂບັນຫາສະເພາະໜ້າ ຢູ່ໃນລະດັບຫຼາຍ. ສໍາລັບດ້ານທັກສະໂດຍລວມຜູ້ປະກອບການແມ່ນໃຫ້ຄວາມສໍາຄັນຢູ່ໃນລະດັບປານກາງ ໃນນີ້ ຜູ້ປະກອບການໃຫ້ຄວາມສໍາຄັນສູງສຸດແມ່ນມີຄວາມສາມາດໃນການສື່ສານ (ເວົ້າ, ຂຽນ) ຢູ່ໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນຕິດຕາມເຕັກໂນໂລຢີ ແລະ ຄວາມຮູ້ໃໝ່ໆ ຢູ່ໃນລະດັບປານກາງ ແລະ ດ້ານອື່ນໆຕາມລໍາດັບ. ເຊິ່ງສອດຄ່ອງ ກັບຜົນການສຶກສາຂອງ (Chanthaphom, 2018) ທີ່ຄົ້ນຄວ້າກ່ຽວກັບຄວາມຕ້ອງການຈ້າງງານຂອງຂະແໜງບໍລິການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ແລະ ຜົນການສຶກສາຂອງ (Phuttavong, 2020) ທີ່ຄົ້ນຄວ້າກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານໃນທຸລະກິດຮ້ານອາຫານໃນນະຄອນຫຼວງພະບາງ ຕ່າງກໍ່ໃຫ້ຄໍາເຫັນວ່າ ຜູ້ປະກອບການທຸລະກິດບໍລິການສ່ວນຫຼາຍແມ່ນໃຫ້ຄວາມສໍາຄັນດ້ານບຸຄະລິກກະພາບ, ຄວາມຄິດສ້າງສັນ ແລະ ຄວາມສາມາດໃນການແກ້ໄຂບັນຫາສະເພາະໜ້າ. ນອກຈາກນີ້ຍັງສອດຄ່ອງກັບຜົນການສຶກສາຂອງ (Souvanthong, 2022) ທີ່ຄົ້ນຄວ້າກ່ຽວກັບ ປັດໄຈທີ່ສົ່ງຜົນຕໍ່ການຈ້າງງານໃນທຸລະກິດໂຮງແຮມ ແລະ ທຸລະກິດການທ່ອງທ່ຽວຂອງນະຄອນຫຼວງພະບາງ ແຂວງຫຼວງພະບາງ ທີ່ວ່າ ຜູ້ປະກອບການທຸລະກິດໂຮງແຮມ ແລະ ທຸລະກິດການທ່ອງທ່ຽວໃຫ້ຄວາມສໍາຄັນວິຊາສະເພາະ, ທັກສະການສື່ສານ, ພາສາຕ່າງປະເທດເປັນຫຼັກ.

### 4.2 ປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ

ຈາກຜົນການວິເຄາະແບບຈຳລອງ ປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການພົບວ່າມີ ພຽງແຕ່ 4 ປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານ ເປັນຕົ້ນແມ່ນ ປັດໄຈດ້ານບຸກຄະລິກກະພາບຂອງແຮງງານ, ຮອງລົງມາແມ່ນປັດໄຈທາງດ້ານຄວາມຮູ້ ແລະ ຄວາມສາມາດ, ປັດໄຈທາງດ້ານທັກສະຂອງແຮງງານ ແລະ ປັດໄຈດ້ານວິຊາສະເພາະຂອງແຮງງານ ທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການຕາມລຳດັບ ດ້ວຍລະດັບຄວາມສຳຄັນທາງສະຖິຕິ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ (Padabdeth & Sengchan, 2012) ທີ່ຄົ້ນຄວ້າກ່ຽວກັບຄວາມຕ້ອງການຈ້າງງານໃນຕະຫຼາດແຮງງານ ແຂວງຫຼວງພະບາງ ພົບວ່າຄວາມຕ້ອງການຈ້າງງານທີ່ມີບຸກຄະລິກກະພາບທີ່ດີຈະສ້າງພາບລັກທີ່ດີ ແລະ ຈະມີໂອກາດໃນການຈ້າງງານຫຼາຍກວ່າ ເພາະວ່າການເຮັດວຽກໃນຂະແໜງບໍລິການນັ້ນມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງສ້າງພາບລັກໃນເລື່ອງການໃຫ້ບໍລິການ ແລະ ນອກຈາກນີ້ຍັງສອດຄ່ອງກັບຜົນການສຶກສາຂອງ (Pholsena & Phonvisay, 2023) ທີ່ຄົ້ນຄວ້າກ່ຽວກັບການພັດທະນາການທ່ອງທ່ຽວ ແລະ ຕະຫຼາດແຮງງານທ້ອງຖິ່ນໃນແຂວງຫຼວງພະບາງ ແລະ (Sriboon, 2013) ທີ່ຄົ້ນຄວ້າກ່ຽວກັບຄວາມຕ້ອງການຈ້າງງານ ຂອງ ວິສາຫະກິດ ຂະໜາດນ້ອຍ ແລະ ກາງໃນ ແຂວງເພັດສະບູລີ ຕ່າງກໍ່ໃຫ້ຄວາມເຫັນວ່າ ຄວາມຮູ້, ຄວາມສາມາດ, ວິຊາສະເພາະ ແລະ ທັກສະຂອງແຮງງານ ເປັນຕົວຕັດສິນໃນການເຂົ້າສູ່ຕະຫຼາດແຮງງານ.

## 5. ສະຫຼຸບ

ຜົນຂອງການຄົ້ນຄວ້າ ພົບວ່າ. ຄວາມຄິດເຫັນຕໍ່ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ນັ້ນແມ່ນ ຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ໃຫ້ຄວາມສຳຄັນຄຸນລັກສະນະແຮງງານໂດຍລວມຢູ່ໃນລະດັບປານກາງ ເຊິ່ງມີລາຍລະອຽດດັ່ງນີ້: ດ້ານບຸກຄະລິກກະພາບ ຢູ່ໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນດ້ານຄວາມຮູ້ ແລະ ຄວາມສາມາດ ຢູ່ໃນລະດັບປານກາງ, ຕໍ່ມາຈະແມ່ນດ້ານທັກສະຂອງແຮງງານ ແລະ ສຸດທ້າຍແມ່ນດ້ານຄວາມຮູ້ວິຊາສະເພາະຂອງແຮງງານ ຢູ່ໃນລະດັບໜ້ອຍ. ສຳລັບປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ ພົບວ່າມີ ພຽງແຕ່ 4 ປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນທິດທາງດຽວກັນຄື: ເຊິ່ງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຫຼາຍທີ່ສຸດແມ່ນປັດໄຈດ້ານບຸກຄະລິກກະພາບຂອງແຮງງານ, ຮອງລົງມາແມ່ນປັດໄຈທາງດ້ານຄວາມຮູ້ ແລະ ຄວາມສາມາດ, ປັດໄຈທາງດ້ານທັກສະຂອງແຮງງານ ແລະ ປັດໄຈດ້ານວິຊາສະເພາະຂອງແຮງງານ ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການຕາມລຳດັບດ້ວຍລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ສຳລັບຂໍ້ຈຳກັດຂອງການຄົ້ນຄວ້າໃນຄັ້ງນີ້ແມ່ນ ບັນດາຜູ້ປະກອບການທຸລະກິດບໍລິການຈຳນວນໜຶ່ງຍັງບໍ່ເຂົ້າໃຈ, ບໍ່ໃຫ້ຄວາມສຳຄັນຂອງການຄົ້ນຄວ້າກ່ຽວກັບການຈ້າງງານ ແລະ ຂາດການໃຫ້ຄວາມຮ່ວມມືໃນການສະໜອງຂໍ້ມູນ (ຕອບແບບສອບຖາມ) ໃຫ້ຢ່າງຈິງຈັງ ເທົ່າທີ່ຄວນ. ໃນຂະນະດຽວກັນ ການສຶກສາຄັ້ງນີ້ ເປັນການສຶກສາສະເພາະຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງເທົ່ານັ້ນ ແລະ ເປັນການວິເຄາະດ້ວຍວິທີປະລິມານ ເທົ່ານັ້ນ. ສຳລັບການວິໄຈໃນອະນາຄົດໃຫ້ຂະຫຍາຍຂອບເຂດພື້ນທີ່ການວິໄຈກວ້າງອອກຕື່ມ ແລະ ເພີ່ມການວິເຄາະໃນທາງຄຸນນະພາບເພື່ອເຈາະເລິກເຖິງປັດໄຈທີ່ສົ່ງຕໍ່ຄວາມຕ້ອງການຈ້າງງານ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມນັກຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນ ໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Bundakone, L., & Chansouk, S. (2012). *Factors influencing participation in the labor market of female workers in the industrial sector*. Department of Economics. Faculty of Economics and Tourism. Souphanouvong University.

Chanthaphom, K. (2018). *Labor needs of entrepreneurs in the service sector in Xayabuli District, Xayabuli Province*. Department of Economics. Faculty of Economics and Tourism. Souphanouvong University.

Chitavong, T. (2023). Factors Affecting the Employment of Small and Medium Enterprises of service sector in the municipality of Pang District, Xiengkhuang Province. [Unpublished Master thesis]. Faculty of Economics and Tourism. Souphanouvong University.

Deephai, S. (2021). Factors Affecting Students' Labour Market Intention in Dual Education Project, *technical education journal*, king Mungkout's university of technology north bankok. *12*(1).

Department of Industry and Commerce. (2025). *Annual report of Department of Industry and Commerce office implementation 2025*. Luangprabang province.

Inthakesone, B. (2008). *Econometrics*, Faculty of Economics and Business Management. National University of Laos.

Padabdeth, P.,& Sengchan, S.(2012). *Labor demand in the labor market within LuangPrabang*, Department of Economics, Faculty of Economics and Tourism, Souphanouvong University.

Phiphavong, T. (2017). *Factors affecting participation in the labor market in the Banque Pour le Commerce Exterieur Lao public, LuangPrabang Branch*. Department of Economics, Faculty of Economics and Tourism, Souphanouvong University.

Pholsena, S. & Phonvisay, A. (2023). Tourism Development and Local Labor Market in Luang Prabang, Laos. *Journal of Southeast Asian Studies, 54*(2), 215-232.

Phuttavong, S. (2020), *Factors affecting labor demand in restaurant businesses in Luang Prabang City*.

Department of Economics. Faculty of Economics and Tourism. Souphanouvong University.

Siphanthong, B., Sioudomphan, S., Sengdala, C., Keowduangkham, P., & Chittaphone, N. (2024). Analyzing the Model of Demand and Supply of Labor Post-Coronavirus Disease 2019 (COVID-19) in LuangPrabang City. *Souphanouvong University Journal of Multidisciplinary Research and Development*. *10*(2). pp 234-243

Souksavath, S. (2008). *Labor economics*. Faculty of Economics and Business Management, National University of Laos.

Souvanthong, N. (2022). *Factors affecting the employment in hotel and tourism bussines of Luang Prabang city Luang Prabang province*. Faculty of Economics and Business Management, National University of Laos.

Sriboon, W. (2013). Labor needs of small and medium enterprises (SMEs) in Petchaburi Province, Research paper presented at the 4th Hat Yai Academic Conference on 10May 2013 (542) 119.

Vannalar, V. (2026). Analyzing the Labor Demand of Restaurant Businesses in LuangPrabang City. Souphanouvong University Journal Multidisciplinary Research and Development, 11(Special Issue), 44–51. https://doi.org/10.69692/SUJMRD11Special44

Yamane, T. (1967). *Statistics: An Introductory Analysis*, 2nd Edition, New York: Harper and Row.

ຕາຕະລາງ 4: ຄວາມຄິດເຫັນຕໍ່ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານຂອງຜູ້ປະກອບການທຸລະກິດບໍລິການໃນນະຄອນຫຼວງພະບາງ

| ເນື້ອໃນ | ຈຳນວນ | $\bar{X}$ | S.D. | ລະດັບຄວາມສຳຄັນ |
|---|---|---|---|---|
| ດ້ານບຸກຄະລິກກະພາບ | 256 | 4.50 | 0.39 | ຫຼາຍທີ່ສຸດ |
| ດ້ານຄວາມຮູ້ ແລະ ຄວາມສາມາດ | 256 | 2.44 | 0.51 | ໜ້ອຍ |
| ດ້ານທັກສະຂອງແຮງງານ | 256 | 2.98 | 0.52 | ປານກາງ |
| ດ້ານຄວາມຮູ້ວິຊາສະເພາະຂອງແຮງງານ | 256 | 3.35 | 0.48 | ປານກາງ |
| **ຄ່າສະເລ່ຍລວມ** | | **3.32** | **0.49** | **ປານກາງ** |

ແຫຼ່ງຂໍ້ມູນ: ຈາກການເກັບກຳຂໍ້ມູນຕົວຈິງຜ່ານແບບສອບຖາມ ແລະ ການວິເຄາະຜ່ານໂປແກຣມສຳເລັດຮູບທາງສະຖິຕິ

ຕາຕະລາງ 5: ຜົນການວິເຄາະປັດໄຈທີ່ສົ່ງຜົນຕໍ່ຄວາມຕ້ອງການຈ້າງງານ ຂອງ ຜູ້ປະກອບການທຸລະກິດບໍລິການ ໃນນະຄອນຫຼວງພະບາງ

**Coefficients**[a]

| Model | | Unstandardized Coefficients | | Standardized Coefficients | t | Sig. |
|---|---|---|---|---|---|---|
| | | B | Std. Error | Beta | | |
| 1 | (Constant) | -20.026 | 13.883 | | -2.007 | 0.160 |
| | X1 | 0.212 | 1.582 | 0.126 | 4.389** | 0.046 |
| | X2 | 0.192 | 0.051 | 0.964 | 6.877** | 0.030 |
| | X3 | 0.151 | 0.003 | 0.650 | 6.547** | 0.025 |

| | | | | | |
|---|---|---|---|---|---|
| X4 | 0.109 | 0.045 | 0.831 | 4.574** | 0.032 |
| R = 0.909<br>R Square = 0.826<br>Adjusted R Square = 0.807<br>Durbin-Watson = 1.679<br>Sum of Squares = 2.038<br>F = 11.421<br>Sig = 0.000 | | | | | |
| a. Dependent Variable: Y | | | | | |

ແຫຼ່ງຂໍ້ມູນ: ຈາກການເກັບກຳຂໍ້ມູນຕົວຈິງຜ່ານແບບສອບຖາມ ແລະ ການວິເຄາະຜ່ານໂປແກຣມສຳເລັດຮູບທາງສະຖິຕິ